**8. ບໍລິສັດຫຼັກຊັບສາມາດໃຫ້ບໍລິການຫຍັງແດ່?**

ໃນ ສປປ ລາວ ບໍລິສັດຫຼັກຊັບສາມາດໃຫ້ບໍລິການໄດ້ 3 ປະເພດ ດັ່ງລຸ່ມນີ້:

(1) **ທີ່ປຶກສາທາງດ້ານການເງິນ:** ແມ່ນໃຫ້ຄຳປຶກສາກ່ຽວກັບການປັບປຸງໂຄງສ້າງດ້ານການຈັດຕັ້ງ, ການຄຸ້ມຄອງບໍລິຫານ, ດ້ານການເງິນ, ການເຄື່ອນໄຫວທຸລະກິດ ແລະ ອື່ນໆ ເພື່ອກະກຽມການອອກຈຳໜ່າຍຫຼັກຊັບໃຫ້ແກ່ມວນຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ.

(2) **ນາຍໜ້າຊື້-ຂາຍຫຼັກຊັບ:** ແມ່ນເປັນສື່ກາງ ຫຼື ເປັນຕົວແທນ ເພື່ອດຳເນີນທຸລະກຳຊື້-ຂາຍຫຼັກຊັບຕາມການສັ່ງຊື້ ຫຼື ສັ່ງຂາຍຂອງລູກຄ້າ, ຊື້-ຂາຍຫຼັກຊັບໃນນາມບໍລິສັດຫຼັກຊັບ ໂດຍໃຊ້ເງິນ ແລະ ຫຼັກຊັບ ຂອງບໍລິສັດຫຼັກຊັບ,ໃຫ້ຄຳປຶກສາໂດຍກົງແກ່ຜູ້ລົງທຶນ ກ່ຽວກັບການລົງທຶນໃສ່ຫຼັກຊັບ ຫຼື ກຸ່ມຫຼັກຊັບ, ພ້ອມນີ້ຍັງສາມາດເຮັດໜ້າທີ່ເປັນທີ່ປຶກສາທາງດ້ານການເງິນໄດ້.

(3) **ຜູ້ຄໍ້າປະກັນການອອກຈຳໜ່າຍຫຼັກຊັບ:** ແມ່ນເປັນຜູ້ກຳນົດລາຄາ ແລະ ຈຳນວນຫຼັກຊັບທີ່ຈະອອກຈຳໜ່າຍ, ໃຫ້ການຄໍ້າປະກັນການອອກຈຳໜ່າຍຫຼັກຊັບ ດ້ວຍການຊ່ວຍຈຳໜ່າຍ ຫຼື ຮັບຊື້ຫຼັກຊັບບາງສ່ວນ ຫຼື ທັງໝົດ ຈາກບໍລິສັດອອກຈຳໜ່າຍຫຼັກຊັບ ໃນສ່ວນທີ່ຈຳໜ່າຍບໍ່ໝົດ ເພື່ອຮັບປະກັນຄວາມສຳເລັດຂອງການອອກຈຳໜ່າຍຫຼັກຊັບ.